# ສະພາບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍ ໃນການຄຸ້ມຄອງລັດ ແລະ ສັງຄົມ ດ້ວຍກົດໝາຍ ຢູ່ ສປປ ລາວ

ສະເໜີໂດຍ: ຄົມວິກິດ ສິມມະລີວົງ
ເບີໂທ: 97114339
56520400



# ການຈັດຕັ້ງເຄື່ອນໄຫວຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍຢູ່ ສປປລາວ.

ນັບແຕ່ໄດ້ລິເລີ່ມການນຳພາພາລະກິດປ່ຽນແປງໃໝ່ມາຮອດປະຈຸບັນນີ້ ພັກເຮົາຍາມໃດກໍ່ຖືການກໍ່ສ້າງລັດແຫ່ງກົດໝາຍເປັນບັນຫາສຳຄັນ ໂດຍສະເພາະແມ່ນການສົ່ງເສີມບົດບາດຂອງກົດໝາຍໃນການຄຸ້ມຄອງລັດ ແລະ ຄຸ້ມຄອງສັງຄົມຕາມທິດສ້າງລັດເປັນຂອງປະຊາຊົນ , ໂດຍປະຊາຊົນ ແລະ ເພື່ອປະຊາຊົນ.



# ການຈັດຕັ້ງເຄື່ອນໄຫວຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍຢູ່ ສປປລາວ.

ອັນພົ້ນເດັ່ນແມ່ນພາຍຫລັງທີ່ພວກເຮົາໄດ້ປະກາດໃຊ້ລັດຖະທຳມະນູນ ເຊິ່ງຖືວ່າເປັນບາດລ້ຽວໃໝ່ ແລະ ເປັນຈຸດເລີ່ມຕົ້ນໃນການຫັນປ່ຽນຈາກການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍມະຕິ, ຄຳສັ່ງ, ຂໍ້ຕົກລົງ... ມາສູ່ການຄຸ້ມຄອງລັດດ້ວຍກົດໝາຍ ເຊິ່ງໄດ້ສ້າງເງື່ອນໄຂດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົງຈັກລັດ ແລະ ສັງຄົມເຮົາມີບາດກ້າວຫັນປ່ຽນດີຂຶ້ນເປັນກ້າວໆມາ.

ອັນທີ່ເປັນພື້ນຖານກວ່າໝູ່ ແມ່ນລັດເຮົາສາມາດຫັນລັດຖະທຳມະນູນມາສ້າງເປັນກົດໝາຍໃນຂົງເຂດຕ່າງໆ. ມາປະຈຸບັນນີ້ພວກເຮົາສາມາດສ້າງບັນດາກົດໝາຍໄດ້ແລ້ວ 166 ກວ່າສະບັບ. ເປັນຕົ້ນກົດໝາຍຂອງເຂດການປົກຄອງ ແລະ ຍຸຕິທຳ, ກົດໝາຍຂົງເຂດເສດຖະກິດ ແລະ ການເງິນ, ກົດໝາຍຂົງເຂດແຮງງານ ແລະຊັບພະຍາກອນທຳມະຊາດ, ກົດໝາຍຂົງເຂດວັດທະນະທຳ-ສັງຄົມ...

ນອກນັ້ນ, ຍັງມີນິຕິກຳອື່ນໆທີ່ຖັດຈາກກົດໝາຍ ເຊັ່ນ: ລັດຖະດຳລັດ, ລັດຖະບັນຍັດຂອງປະທານປະເທດ, ມະຕິຕົກລົງ, ຄຳແນະນຳຂອງສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ, ມະຕິຕົກລົງຂອງລັດຖະບານ, ດຳລັດຂອງລັດຖະບານ ແລະ ດຳລັດຂອງນາຍົກລັດຖະມົນຕີ, ຂໍ້ຕົກລົງຂອງລັດຖະມົນຕີ, ຂອງປະທານຄະນະກຳມະການທຽບເທົ່າກະຊວງ, ຂອງເຈົ້າແຂວງ, ເຈົ້າຄອງນະຄອນ, ເຈົ້າ ແລະ ນາຍບ້ານ.

ຜົນສຳເລັດໃນການສ້າງ ແລະ ປະກາດໃຊ້ກົດໝາຍ ໄດ້ເປັນການສ້າງເງື່ອນໄຂໃຫ້ລັດເຮົາສາມາດປະຕິບັດພາລະບົດບາດຄຸ້ມຄອງໃນທົ່ວສັງຄົມດ້ວຍກົດໝາຍໄດ້ຢ່າງມີປະສິດທິຜົນ, ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນໄດ້ຢ່າງກວ້າງຂວາງ, ປະກອບສ່ວນເຂົ້າໃນການຮັບປະກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມຍຸຕິທຳໃນສັງຄົມໃນລະດັບທີ່ແນ່ນອນສົມຄວນ, ເສດຖະກິດໄດ້ຮັບການພັດທະນາ ແລະ ຄຸ້ມຄອງດ້ວຍລະບຽບກົດໝາຍ, ຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າໄດ້ຮັບຍົກລະດັບຂຶ້ນເປັນກ້າວໆ.



# ບັນຫາທີ່ຕັ້ງຂຶ້ນໃນການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ.

ແຕ່ເຖິງຢ່າງໃດກໍຕາມ, ເມື່ອອີງໃສ່ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຂອງລັດຖະບານໃນແຕ່ລະໄລຍະ, ບົດສະຫຼຸບການຈັດຕັ້ງເຄື່ອນໄຫວຂອງສະພາແຫ່ງຊາດ, ບົດສະຫຼຸບວຽກງານກວດກາທົ່ວປະເທດ, ບົດຄຳເຫັນຂອງກະຊວງຍຸຕິທຳກ່ຽວກັບການສະຫຼຸບຫຍໍ້ 40 ປີ ແຫ່ງການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍລັດຖະທຳມະນູນ ແລະ ກົດໝາຍ, ບົດສະຫຼຸບການຈັດຕັ້ງເຄື່ອນໄຫວວຽກງານຂອງຂະແໜງການຕ່າງໆໃນທົ່ວປະເທດ, ຜົນການຄົ້ນຄວ້າວິໄຈຂອງບັນດານັກວິທະຍາສາດໃນກອງປະຊຸມສຳມະນາວິທະຍາສາດໃນຄັ້ງນີ້... ເປັນຕົ້ນ: ນະໂຍບາຍດຶງດູດການລົງທຶນ, ການພັດທະນາວິສາຫະກິດ, ການກຳນົດລາຄາຊື້-ຂາຍສິນຄ້າ, ການຄ້ຳປະກັນລາຄາເຂົ້າ,... ໄດ້ມີຄວາມເປັນເອກະພາບລະດັບສູງວ່າການປະຕິບັດລັດແຫ່ງກົດໝາຍຍັງມີຈຸດອ່ອນຂໍ້ຄົງຄ້າງຫຼາຍຢ່າງ ແລະ ເປັນສາເຫດທີ່ເຮັດໃຫ້ເກີດບັນຫາຫຍຸ້ງຍາກຫຼາຍດ້ານຕໍ່ກັບພັດທະນາເສດຖະກິດ-ສັງຄົມຂອງປະເທດເຮົາ ເຊັ່ນ:

ບັນດາກົດໝາຍ ແລະ ນິຕິກຳຕ່າງໆ ກໍໄດ້ກໍ່ສ້າງ, ປັບປຸງໃຫ້ມີຄວາມສົມບູນ ແລະ ເປັນລະບົບຄົບຊຸດໂດຍພື້ນຖານ.,

ແຕ່ການ ຈັດຕັ້ງປະຕິບັດກົດໝາຍຍັງຊັກຊ້າ, ບໍ່ເຂັ້ມງວດເທົ່າທີ່ຄວນ, ປະກົດການສວຍໃຊ້ຖານະຕຳແໜ່ງເພື່ອຜົນປະໂຫຍດສ່ວນຕົວ, ພັກພວກ ຈຸ້ມເຈື້ອເຊື້ອສາຍ ແລະ ການສໍ້ລາດບັງຫຼວງກໍຍັງບໍ່ທັນໄດ້ຮັບການແກ້ໄຂຢ່າງຂາດຕົວ.

ການໂຄສະນາ, ສຶກສາອົບຮົມກົດໝາຍໃຫ້ເປົ້າໝາຍຕ່າງໆຍັງບໍ່ທັນກວ້າງຂວາງ, ທົ່ວເຖິງ ແລະ ເລິກເຊິ່ງ ພາໃຫ້ມີການລະເມີດລະບຽບກົດໝາຍຢ່າງກວ້າງຂວາງ ເປັນຕົ້ນ: ກົດໝາຍຂົງເຂດເສດຖະກິດ-ການເງິນ, ກົດໝາຍຂົງເຂດຊັບພະຍາກອນທຳມະຊາດ, ທີ່ດິນ, ບໍ່ແຮ່, ລະບຽບການຈາລະຈອນ... ແມ່ນຖືກລະເມີດຢ່າງກວ້າງຂວາງ.

# ບັນຫາທີ່ຕັ້ງຂຶ້ນໃນການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ.

- ປະກົດການລັກຊັບ, ການສໍ້ໂກງຊັບ, ກຸ່ມຍັກຍອກຊັບ, ການຮັບສິນບົນ, ການໃຫ້ສິນບົນ, ການສໍ້ລາດບັງຫຼວງ, ການຄ້າຢາເສບຕິດ, ການຄ້າຂາຍເຖື່ອນ ແລະ ບັນຫາສັງຄົມອື່ນໆຍັງມີລັກສະນະແຜ່ຫຼາຍ.
- ການຄຸ້ມຄອງການລົງທຶນ, ທຶນຊ່ວຍເຫຼືອ ບໍ່ມີປະສິດທິຜົນ, ບໍ່ເປັນໄປຕາມລະບຽບຫຼັກການ, ຂາດປະສິດທິຜົນ, ຮ້າຍແຮງໄປກວ່ານັ້ນຍັງມີການຟຸມເຟືອຍໃນການນໍາໃຊ້ແຫລ່ງທຶນທີ່ມີຢ່າງຈໍາກັດ ເປັນສາຍເຫດເຮັດເກີດບັນຫາໜີ້ສິນ, ເກີດຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ດັ່ງທຸກວັນນີ້.
- ການຈັດຕັ້ງປະຕິບັດກົດໝາຍບາງຄັ້ງພິຈາລະນາຄະດີຍັງເຮັດແບບອັດຕະວິໄສ, ບໍ່ເຮັດຕາມຂັ້ນຕອນທີ່ກົດໝາຍກໍານົດໄວ້ເຊັ່ນ: ດໍາເນີນຄະດີຊັກຊ້າ, ແກ່ຍາວເວລາໂດຍບໍ່ມີເຫດຜົນ ເຮັດໃຫ້ສັງຄົມມີທາງສຽງຕໍານິວິຈານ ກາຍເປັນຜົນສະທ້ອນບໍ່ດີຕໍ່ບົດບາດການນໍາພາຂອງພັກ ແລະ ການຄຸ້ມຄອງຂອງລັດກໍ່ຄືການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ.




# ວິທີການເພື່ອຮັບປະກັນໃນການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດ ໝາຍ.

ເພື່ອຮັບປະກັນຜົນສຳເລັດໃນການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ ຂອງພວກເຮົາຕ້ອງເອົາໃຈໃສ່ບາງດ້ານ ດັ່ງນີ້:

1). ຕ້ອງເຮັດໃຫ້ກົດໝາຍດຳລົງບົດບາດເປັນຫຼັກການລວມໃນທົ່ວສັງຄົມ ແລະ ທຸກການພົວພັນ ສັງຄົມຕ້ອງໄດ້ດັດປັບດ້ວຍກົດ ໝາຍ.

2). ຕ້ອງເອົາໃຈໃສ່ພັດທະນາຄຸນນະພາບຂອງກົດໝາຍໃຫ້ສູງຂຶ້ນ.

3). ເພີ່ມທະວີຄວາມສັກສິດໃນການຈັດຕັ້ງປະຕິບັດກົດໝາຍ.

ສືບຕໍ່ເພີ່ມທະວີບົດບາດຂອງສະພາແຫ່ງຊາດ, ສານປະຊາຊົນ ແລະ ໄອຍະການປະຊາຊົນໃຫ້ເຂັ້ມແຂງ.

• ໜຶ່ງ: ສະພາແຫ່ງຊາດ:

- ເພີ່ມທະວີບົດບາດຂອງສະພາແຫ່ງຊາດໃຫ້ເດັ່ນຂຶ້ນໃນການກໍ່ສ້າງກົດໝາຍ, ການຕິດຕາມກວດກາການເຄື່ອນໄຫວຂອງອົງການບໍລິຫານ, ສານປະຊາ ຊົນ ແລະ ອົງການໄອຍະການປະຊາຊົນໃຫ້ມີຄຸນນະພາບ ແລະ ມີຜົນສັກສິດ.

- ຍົກສູງຄຸນນະພາບການ ຄື່ອນໄຫວກວດກາຂອງສະພາແຫ່ງຊາດທີ່ມີຄວາມສັກສິດ ແລະ ມີປະສິດທິຜົນ.

- ປັບປຸງການຈັດຕັ້ງສະພາແຫ່ງຊາດ ແລະ ຍົກສູງຄຸນນະພາບການ ເຄື່ອນໄຫວຂອງຜູ້ແທນສະພາແຫ່ງຊາດ.

ສອງ: ສືບຕໍ່ປັບປຸງພື້ນຖານລັດບໍລິຫານ.

- ຕ້ອງເອົາໃຈໃສ່ການບໍລິຫານໃຫ້ມີປະສິດທິພາບຕາມທິດທີ່ວ່າ ເຮັດໃຫ້ອົງການບໍລິຫານຂັ້ນສູງກາງກະທັດລັດ, ປະຕິບັດຕາມພາລະບົດບາດການຄຸ້ມຄອງມະຫາພາກເປັນຕົ້ນຕໍ. ເຮັດໃຫ້ການບໍລິຫານທ້ອງຖິ່ນມີຄວາມສາມາດ ແລະ ມີກຳລັງແຮງຫຼາຍຂຶ້ນໃນການຈັດຕັ້ງປະຕິບັດ.

- ອັນສຳຄັນກວ່າໝູ່ໃນປະຈຸບັນນີ້ການປັບປຸງຂັ້ນຄຸ້ມຄອງໃຫ້ຈະແຈ້ງ, ໂດຍມອບສິດ ແລະ ຄວາມຮັບຜິດຊອບຕັດສິນບັນຫາໃນ ແຕ່ລະຂັ້ນໃຫ້ຈະແຈ້ງ ເພື່ອບໍ່ໃຫ້ມີຊ່ອງວ່າງແກ່ການສວຍໂອກາດສໍ້ລາດບັງຫຼວງ ແລະ ຟຸມເຟືອຍ.

ສາມ: ອົງການຍຸຕິທຳ.

- ສືບຕໍ່ປັບປຸງລະບົບສານປະຊາຊົນ ແລະ ໄອຍະການປະຊາຊົນໃຫ້ເຂັ້ມແຂງ, ຕ້ອງໄດ້ສຶກສາອົບຮົມການເມືອງແນວຄິດ, ປັບປຸງຄຸນທາດການເມືອງ, ຈັນຍາທຳໃຫ້ແກ່ພະ ນັກງານໃນອົງການນີ້ໃຫ້ຕິດແໜ້ນກັບການຍົກລະດັບຄວາມຮັບຮູ້, ຄວາມສາມາດກັບວິຊາການ ແລະ ຄວາມເປັນເຈົ້າການ, ຮັບຜິດຊອບຕໍ່ການປະຕິບັດໜ້າທີ່ຂອງເຂົາເຈົ້າເຮັດໃຫ້ສານປະຊາຊົນ, ອົງການໄອຍະການປະຊາຊົນ ແລະເຈົ້າໜ້າທີ່ສືບສວນ, ສອບສວນຂັ້ນຕ່າງໆເຊິ່ງເປັນຜູ້ປົກປ້ອງກົດໝາຍຕ້ອງໄດ້ດຳເນີນງານດ້ວຍຄວາມສຸຂຸມ, ຮອບຄອບ, ທ່ຽງທຳເພື່ອປົກປ້ອງຄວາມຍຸຕິທຳ, ປົກປ້ອງຜົນປະໂຫຍດອັນຊອບທຳຂອງລັດ ແລະ ຂອງພົນລະ ເມືອງ ດ້ວຍການຍຶດໝັ້ນແນວຄິດທີ່ວ່າ: "ຜູ້ກະທຳຜິດຕ້ອງຖືກລົງໂທດຕາມກົດໝາຍ, ຜູ້ບໍ່ກະທຳຜິດຕ້ອງໄດ້ຮັບການປົກປ້ອງຢ່າຊອບທຳ".

1. ຕ້ອງຫັນແນວທາງ-ນະໂຍບາຍ ວຽກງານການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ ໃຫ້ກາຍເປັນວະລະແຫ່ງຊາດໃນກອງປະຊຸມໃຫຍ່ຂອງພັກ.

2. ການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ ຕ້ອງເລີ່ມພະນັກງານນຳພາ, ພະນັກງານຄຸ້ມຄອງລັດ ເປັນແບບຢ່າງນຳໜ້າ.

3. ດຳເນີນມາດຕະການ ຕໍ່ພະນັກງານລັດ ທີ່ລະເມີດກົດໝາຍຢ່າງເຂັ້ມງວດ.

4. ເສີມຂະຫຍາຍແນວຄິດ, ການກະທຳ ແລະການເຄື່ອນໄຫວຂອງສັງຄົມພາຍໃຕ້ລະບຽບກົດໝາຍໃຫ້ເປັນຂະບວນກ້ວາງຂວາງແລະ ສັກສິດ.


ຂໍຂອບໃຈ